Souphanouvong University Journal of Multidisciplinary Research and Development
2024, Vol: 10, No: 3, 121-128
httys://doi.org/10.69692/SUJMRD100121

# Factors Affecting the Growth of Small and Medium Enterprises in Luang Namtha Province

**Soudakone PHOSAVATH*, Soulisay HONGSAKHONE, Soutthavone SIOUDOMPHAN**
*Department of Economics Faculty of Economics and Tourism Souphanouvong University, Lao PDR*

***Correspondence:**
*Soudakone PHOSAVATH, People's Council of Luangprabang Province*

*Province*

*Tel: +856 020 9626 3666, E-mail:* larsapha@gmail.com

***Submitted: July 11, 2024***
***Revised: July 30, 2024***
***Accepted: August 07, 2024***

## ABSTRACT

The purpose of this study is to study the operating conditions of small and medium enterprises and the factors affecting the growth of small and medium enterprises in Luang Namtha Province. which uses descriptive study methods, surveys, and questionnaires to collect data from small and medium-sized enterprise operators who have registered enterprises at the Department of Industry and Trade in Luang Namtha Province according to the law in the number of 233 business units using basic statistics such as average value and standard deviation and analyzed with an ordinary least squares regression model.

The results of the study found that most of the business operators are males aged between 37-43 years old, have a high degree of specialization, and have previous experience in the service sector, which a business is owned by a single Lao person. The registered capital of the business is less 100,000,000 kip, it is a source of funds for the family, there are between 5-20 people, the duration of the business operation is less 5 years, the customer group is in the province, the business is mainly in the commercial sector, but the performance is not good compared to last year. Such as, revenue and net profit decreased.

The factors affecting the growth of small and medium-sized enterprises in Luang Namtha province is very important. The include four factors that have a relationship in the same direction, such as leadership factors affecting the growth of enterprises with a statistical significance level of 0.1, strategic decision-making factors affecting the growth of enterprises with a statistical significance level of 0.05, financial factors affecting the growth and stability of enterprises with a statistical significance level of 0.01 and 0.1, respectively, and marketing factors affecting the stability of the enterprise with a statistical significance level of 0.1.

**Keyword:** *Growth, stability, competition, capital sources and business units.*

## 1. ພາກສະເໜີ

ໃນໄລຍະຜ່ານມາ ຍ້ອນຄວາມບໍ່ສະຖຽນລະພາບດ້ານເສດຖະກິດ ແລະ ການເມືອງຂອງຫຼາຍປະເທດ ການປ່ຽນແປງລາຄານ້ຳມັນ ແລະ ລາຄາອາຫານໂລກ, ການປົກປ້ອງ ແລະ ຂັດແຍ່ງຜົນປະໂຫຍດດ້ານການຄ້າລະຫວ່າງປະເທດມະຫາອຳນາດ, ການເພີ່ມຂຶ້ນຂອງໄພທຳມະຊາດໃນພາກພື້ນ ແລະ ການລະບາດຂອງພະຍາດຕ່າງໆ. ບັນຫາດັ່ງກ່າວ ລັດຖະບານຕ້ອງໄດ້ສຸມທຶນຮອນເຂົ້າໃສ່ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຜູ້ທີ່ຖືກຜົນກະທົບຢ່າງຫຼວງຫຼາຍ ເຮັດໃຫ້ການຊຳລະໜີ້ບໍ່ໄດ້ບັນລຸຕາມຄາດໝາຍ, ລາຍຮັບບໍ່ກຸ້ມລາຍຈ່າຍ, ອັດຕາການເຕີບໂຕເສດຖະກິດມີທ່າອ່ຽງຫຼຸດລົງ. ເຊິ່ງວິສາຫະກິດຂະໜາດນ້ອຍ ແລະ ກາງມີບົດບາດສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ປະກອບສ່ວນສ້າງວຽກເຮັດງານທຳ, ສ້າງລາຍໄດ້, ຍົກລະດັບຄຸນນະພາບຊີວິດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ. ແຂວງຫຼວງນ້ຳທາ ເປັນແຂວງໜຶ່ງທີ່ມີເງື່ອນໄຂ ແລະ ທ່າແຮງ ໃນການພັດທະນາເສດຖະກິດ-ສັງຄົມ ເພາະມີຊາຍແດນຕິດກັບ ສປ ຈີນ ແລະ ມຽນມາ, ມີເສັ້ນທາງ (AH3)R3 ຜ່ານແຂວງຫຼວງນ້ຳທາ, ເຊິ່ງເປັນທ່າແຮງໃນການແລກປ່ຽນສິນຄ້າ, ການທ່ອງທ່ຽວ ແລະ ວັດທະນະທຳ-ສັງຄົມ, ເປັນແຂວງທີ່ນອນຢູ່ໃນເສດຖະກິດພາກພື້ນ, ເປັນໃຈກາງຂອງການຂົນສົ່ງຜ່ານແດນລາວ, ໄທ, ຈີນ ແລະ ມຽນມາ; ພ້ອມທັງມີປະຕູເປີດສູ່ພາຍນອກ ເຊັ່ນ: ດ່ານສາກົນ, ດ້ານທ້ອງຖິ່ນ ແລະ ດ່ານປະເພນີ ເປັນຕົ້ນ; ລວມທັງເປັນແຂວງທີ່ມີເສັ້ນທາງລົດໄຟລະຫວ່າງປະເທດຜ່ານ ເປັນຕົ້ນແມ່ນ ມີ 2 ສະຖານີ ຄື: ສະຖານີບໍ່ເຕນ ແລະ ສະຖານີນາເຕີຍ, ເຊິ່ງເປັນການສ້າງໂອກາດໃຫ້ແກ່ການຂົນສົ່ງໂດຍສານ ແລະ ການຂົນສົ່ງສິນຄ້າ, ຍູ້ແຮງການຜະລິດກະສິກຳ, ອຸດສາຫະກຳ, ການບໍລິການ, ການທ່ອງທ່ຽວ ເຕີບໂຕ ແລະ ເສດຖະກິດພາຍໃນຈະໄດ້ຮັບການພັດທະນາ, ຍ້ອນມີຊາຍແດນຕິດກັບບັນດາປະເທດ ທີ່ມີຄວາມເຂັ້ມແຂງທາງດ້ານເສດຖະກິດ ເຮັດໃຫ້ມີທ່າແຮງໃນການອຳນວຍຄວາມສະດວກໃນການພັດທະນາພື້ນຖານໂຄງລ່າງດ້ານການຄົມມະນາຄົມຂົນສົ່ງ ເປັນຕົ້ນ ແມ່ນການສ້າງທາງດ່ວນທີ່ຈະເກີດຂຶ້ນໄວໆນີ້ ຈາກນາເຕີຍ ຫາ ບໍ່ແກ້ວ ແລະ ສູ່ປະເທດໄທ ເພື່ອສົ່ງເສີມການຊື້ຂາຍ, ການແລກປ່ຽນສິນຄ້າກັບບັນດາປະເທດອ້ອມຂ້າງ (ໄທ, ສປ ຈີນ, ມຽນມາ). ໃນໄລຍະ 5 ປີ (2020-2016) ແຂວງຫຼວງນ້ຳທາ ມີອັດຕາການເຕີບໂຕຂອງເສດຖະກິດ ຢູ່ໃນລະດັບ 8,56% ຕໍ່ປີ, ຂະແໜງກະສິກຳຂະຫຍາຍຕົວສະເລ່ຍ 8,84%, ຂະແໜງອຸດສາຫະກຳ ຂະຫຍາຍຕົວສະເລ່ຍ 7,87%, ລວມຍອດຜະລິດຕະພັນພາຍໃນ (GDP) ໄດ້ 3.114,42 ຕື້ກີບ ສະເລ່ຍໃສ່ຫົວຄົນໄດ້ 1.897,51ໂດລາສະຫະລັດ; ສັດສ່ວນໂຄງປະກອບເສດຖະກິດ ຂະແໜງກະສິກຳ ກວມ 49,95%, ຂະແໜງອຸດສາຫະກຳ ກວມ 20,38%, ຂະແໜງບໍລິການ ກວມ 28,15% ແລະ ພາສີ-ອາກອນຜະລິດຕະພັນ ກວມ 1,52%; ອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2021-2025) ຂອງແຂວງ ແຜນຈຸດສຸມທີ 4 ແມ່ນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ວິສາຫະກິດຂອງລັດ ໄປສູ່ຄຸນນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ, ປັບປຸງບັນຍາກາດການດຳເນີນທຸລະກິດ ຢູ່ພາຍໃນແຂວງໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ ແນໃສ່ການຍາດແຍ່ງ ແລະ ດຶງດູດເອົາການລົງທຶນທີ່ມີຄຸນນະພາບ, ຊຸກຍູ້ສົ່ງເສີມ ແລະ ສ້າງຂີດຄວາມສາມາດໃນການແຂ່ງຂັນທຸລະກິດຂອງທຸລະກິດພາຍໃນແຂວງໃຫ້ສູງຂຶ້ນ ກໍຄື ການແກ້ໄຂຄວາມຫຍຸ້ງຍາກຂອງການດຳເນີນທຸລະກິດ, ສະນັ້ນ ການສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ກາງ ກໍເປັນເປັນວຽກງານສຳຄັນທີ່ຈະຕ້ອງໄດ້ສຸມໃສ່ປັບປຸງ ໂດຍສະເພາະ ການຫຼຸດຜ່ອນຂັ້ນຕອນ ແລະ ເວລາໃນການອອກອະນຸຍາດຕ່າງໆ ຂອງຂະແໜງການກ່ຽວຂ້ອງ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ມີຜົນສັກສິດ, ຫຼຸດຜ່ອນຕົ້ນທຶນໃນການດຳເນີນກິດຈະການຂອງພາກທຸລະກິດພາຍໃນແຂວງ ແລະ ເຮັດໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດ ເຊື່ອໝັ້ນ ແລະ ຕັດສິນໃຈເຂົ້າມາດຳເນີນ ແລະ ຂະຫຍາຍທຸລະກິດ

ພາຍໃນແຂວງ ໃຫ້ນັບມື້ນັບຫຼາຍຂຶ້ນ ເປັນກຳລັງແຮງທີ່ສຳຄັນ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ສ້າງພື້ນຖານເສດຖະກິດໃຫ້ເຕີບໃຫຍ່, ໜັກແໜ້ນ ຕາມທິດຍືນຍົງ ແລະ ສີຂຽວ. ພະແນກແຜນການ ແລະ ການລົງທຶນ ແຂວງຫຼວງນ້ຳທາ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 5 ປີ ຄັ້ງທີ IX (2021-2025).

ເຖິງຢ່າງໃດກໍ່ຕາມ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະຂະຫຍາຍຕົວໄດ້ດີກໍຂຶ້ນກັບປັດໄຈຫຼາຍຢ່າງ ໂດຍສະເພາະ ການເຂົ້າຫາແຫຼ່ງທຶນ ຍັງເປັນບັນຫາທີ່ມີຄວາມຫຍຸ້ງຍາກຫຼາຍດ້ານ, ເນື່ອງຈາກບັນດາມາດຖານເງື່ອນໄຂການເຂົ້າຫາແຫຼ່ງທຶນ ຂອງລະບົບທະນາຄານມີຫຼາຍຂອດຫຼາຍຂັ້ນ ແລະ ສິ່ງສຳຄັນ ແມ່ນຮຽກຮ້ອງໃຫ້ມີຫຼັກຊັບຄ້ຳປະກັນສູງ ເມື່ອທຽບໃສ່ຄວາມສາມາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນຍັງຈຳກັດຫຼາຍ. ການຈັດຕັ້ງປະຕິບັດດ້ານນິຕິກຳ, ບາງລະບຽບການ ແລະ ກົນໄກການຄຸ້ມຄອງການປ່ອຍເງິນກູ້ ຍັງບໍ່ມີປະສິດທິພາບ; ຜູ້ບໍລິຫານວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງຂາດຄວາມຮູ້ໃນການສ້າງແຜນທຸລະກິດ, ການບໍລິຫານດ້ານການເງິນ, ການຖືບັນຊີ, ຄວາມສາມາດແຂ່ງຂັນ ແລະ ຂໍ້ຈຳກັດການເຂົ້າເຖິງຕະຫຼາດ; ດັ່ງນັ້ນ, ຜູ້ສຶກສາ ຈຶ່ງມີຄວາມສົນໃຈສຶກສາ ບັນດາເງື່ອນໄຂ, ປັດໄຈ ແລະ ຂໍ້ຈຳກັດຕ່າງໆ ທີ່ກ່ຽວຂ້ອງກັບການເຕີບໂຕ ແລະ ພັດທະນາ ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ດີຂຶ້ນໃນຕໍ່ໜ້າ.

## 2. ອຸປະກອນ ແລະ ວິທີການ

### 2.1 ເຄື່ອງມືທີ່ໃຊ້ໃນການທີ່ໃຊ້ໃນການວິໄຈ

ໃນການສຶກສາຄັ້ງນີ້ ແມ່ນໄດ້ນຳໃຊ້ວິທີການຄົ້ນຄວ້າແບບປະລິມານ (Quantitative Research) ໂດຍການສຶກສາແບບພັນລະນາດ້ວຍວິທີການສຳຫຼວດ (Survey Research Method) ແລະ ໃຊ້ແບບສອບຖາມເປັນເຄື່ອງມືໃນການສຶກສາ. ໂດຍໄດ້ແບ່ງຂໍ້ມູນໃນແບບສອບຖາມອອກເປັນ 4 ສ່ວນ ຄື: ຂໍ້ມູນທົ່ວໄປ ຂອງຜູ້ຕອບແບບສອບຖາມ, ຂໍ້ມູນກ່ຽວກັບວິສາຫະກິດ, ຂໍ້ມູນກ່ຽວກັບປັດໄຈທີ່ສົ່ງຜົນການຂະຫຍາຍຕົວ ຂອງວິສາຫະກິດ ແລະ ຂໍ້ມູນກ່ຽວກັບຜົນການດຳເນີນວິສາຫະກິດ.

### 2.2 ກຸ່ມຕົວຢ່າງ

ປະຊາກອນທີ່ຈະໃຊ້ເຂົ້າໃນການສຶກສາຄັ້ງນີ້ ແມ່ນບັນດາຜູ້ປະກອບການວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ ເຊິ່ງລວມທັງໝົດມີ 554 ວິສາຫະກິດ. ໂດຍການຄິດໄລ່ຕາມສູດຂອງ Taro Yamane (1967) ຈຶ່ງໄດ້ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນມີຈຳນວນ 233 ວິສາຫະກິດ.

### 2.3 ການເກັບລວບລວມຂໍ້ມູນ

ການລວບລວມຂໍ້ມູນຂອງການສຶກສາ ແມ່ນ ໄດ້ໃຊ້ຂໍ້ມູນປະຖົມພູມ ຫຼື ຂໍ້ມູນມືໜຶ່ງ (Primary Data) ເຊິ່ງເປັນຂໍ້ມູນທີ່ໄດ້ມາຈາກການລົງເກັບກຳຂໍ້ມູນຕົວຈິງ ໂດຍການນຳໃຊ້ແບບສອບຖາມເປັນເຄື່ອງມືໃນການເກັບກຳ ແລະ ລວບລວມຂໍ້ມູນ ຈາກບັນດາຜູ້ປະກອບການວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ. ຈຳນວນ 5 ເມືອງ ຄື: ເມືອງຫຼວງນ້ຳທາ, ເມືອງສິງ, ເມືອງລອງ, ເມືອງນາແລ ແລະ ເມືອງວຽງພູຄາ.

### 2.4 ການວິເຄາະຂໍ້ມູນ

ຂໍ້ມູນທັງໝົດທີ່ໄດ້ຈາກແບບສອບຖາມແມ່ນນຳເອົາມາສັງລວມດ້ວຍໂປຼແກຼມ Microsoft Excel ແລະ ເຮັດການທົດສອບ ຫຼື ຄຳນວນຫາຄ່າຕ່າງໆຜ່ານໂປຼແກຼມ SPSS ເພື່ອຄິດໄລ່ຫາ ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຖານ (Standard Deviation) ຂອງສະພາບການດຳເນີນວິສາຫະກິດ ແລະ ໄດ້ນຳໃຊ້ແບບຈຳລອງສົມຜົນຖົດຖອຍກຳລັງສອງນ້ອຍສຸດ (Ordinary Least Square) ເພື່ອຊອກຫາປັດໄຈທີ່ສົ່ງຜົນຕໍ່ກັບການຂະຫຍາຍຕົວຂອງວິສາຫະກິດ, ເຊິ່ງກຳນົດເປັນ 2 ແບບຈຳລອງ ດັ່ງນີ້:

1) ແບບຈຳລອງການສຶກສາປັດໄຈທີ່ສົ່ງຜົນຕໍ່ກັບລະດັບການຂະຫຍາຍຕົວຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ.

$$Y_1 = \beta_0 + \beta_1 X_1 + \beta_2 X_2 + \beta_3 X_3 + \beta_4 X_4 + \beta_5 X_5 + \beta_6 X_6 + \beta_7 X_7 + \beta_8 X_8 + u_i$$

2) ແບບຈຳລອງການສຶກສາປັດໄຈທີ່ສົ່ງຜົນຕໍ່ກັບລະດັບຄວາມຄ່ອງຕົວໃນການດຳເນີນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ.

$$Y_2 = \beta_0 + \beta_1 X_1 + \beta_2 X_2 + \beta_3 X_3 + \beta_4 X_4 + \beta_5 X_5 + \beta_6 X_6 + \beta_7 X_7 + \beta_8 X_8 + u_i$$

**ໂດຍກຳນົດໃຫ້:**

**ຕົວປ່ຽນຕາມ**

$Y_1$ ລະດັບການຂະຫຍາຍຕົວຂອງວິສາຫະກິດ

$Y_2$ ລະດັບຄວາມຄ່ອງຕົວໃນການດຳເນີນວິສາຫະກິດ

**ຕົວປ່ຽນອິດສະຫຼະ**

$X_1$ປັດໄຈດ້ານພາວະຄວາມເປັນຜູ້ນຳ

$X_2$ປັດໄຈດ້ານການຕັດສິນໃຈແບບຍຸດທະສາດ

$X_3$ປັດໄຈດ້ານການຮັບຮູ້ໂອກາດທາງທຸລະກິດ

$X_4$ປັດໄຈດ້ານການບໍລິຫານຈັດການໂອກາດທາງທຸລະກິດ

$X_5$ ປັດໄຈດ້ານນະໂຍບາຍພາກລັດ

$X_6$ ປັດໄຈດ້ານການເງິນ

$X_7$ ປັດໄຈດ້ານໂຄງລ່າງພື້ນຖານ

$X_8$ ປັດໄຈທາງການຕະຫຼາດ

$\beta_0$ ຄ່າສຳປະສິດຄົງທີ່

$\beta_1, \beta_2, \beta_3, \ldots, \beta_8$ ຄ່າສຳປະສິດອິດສະຫຼະສຳພັນຂອງຕົວປ່ຽນອິດສະຫຼະ K = 8

$u_i$ ຄ່າຄວາມຄາດເຄື່ອນ

## 3. ຜົນໄດ້ຮັບ

ຜົນການສຶກສາສະພາບການດຳເນີນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ ພົບວ່າ: ວິສາຫະກິດສ່ວນຫຼາຍແມ່ນກິດຈະການຂອງຄົນລາວ ກວມເອົາ 91.4%; ສ່ວນກິດຈະການຮ່ວມທຶນກັບຕ່າງປະເທດ ກວມເອົາ 8.6% ເທົ່ານັ້ນ; ແລະ ຢູ່ໃນຮູບແບບເຈົ້າຂອງຄົນດຽວ ກວມເອົາ 73.4%; ໂດຍມີມູນຄ່າທຶນຈົດທະບຽນໜ້ອຍກວ່າ 100,000,000 ກີບ ກວມເອົາ 43.3%; ແຫຼ່ງເງິນທຶນທີ່ສຳຄັນ ແມ່ນມາຈາກເງິນທຶນຂອງຄອບຄົວ ເທົ່າກັບ 37.6% ແລະ ກວມເອົາ 61.0% ຂອງກຸ່ມຕົວຢ່າງທັງໝົດ; ມີພະນັກງານຢູ່ລະຫວ່າງ 5–20 ຄົນ ກວມເອົາ 76.4%, ໄລຍະເວລາໃນການດຳເນີນວິສາຫະກິດ ແມ່ນໜ້ອຍກວ່າ 5 ປີ ກວມເອົາ 48.5%; ໂດຍລູກຄ້າຫຼັກໆຂອງວິສາຫະກິດ ແມ່ນມາຈາກພາຍໃນແຂວງ ກວມເອົາ 80.3%; ການດຳເນີນວິສາຫະກິດໂດຍສ່ວນໃຫຍ່ຈະແມ່ນຂະແໜງການຄ້າ ກວມເອົາ 52.8%, ຂະແໜງການຜະລິດ ກວມເອົາ 24.0%, ແລະ ຂະແໜງການບໍລິການ ກວມເອົາ 23.2%; ເຊິ່ງຜົນການດຳເນີນກິດຈະການເມື່ອທຽບຜົນການດຳເນີນງານໃສ່ປີທີ່ຜ່ານມາວິສາຫະກິດຈຳນວນຫຼາຍແມ່ນມີລາຍຮັບລຸດລົງ 63.9%, ມີລາຍຮັບຢູ່ໃນລະດັບເທົ່າເດີມ 27.9%, ສ່ວນວິສາຫະກິດທີ່ມີລາຍຮັບເພີ່ມຂຶ້ນ 8.2% ເທົ່ານັ້ນ.

ສຳລັບ ປັດໄຈທີ່ສົ່ງຜົນຕໍ່ການຂະຫຍາຍຕົວຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ ພົບວ່າ ທັງ 8 ປັດໄຈເຊັ່ນ: ປັດໄຈດ້ານພາວະຄວາມເປັນຜູ້ນຳ, ປັດໄຈດ້ານການຕັດສິນໃຈແບບຍຸດທະສາດ, ປັດໄຈດ້ານການຮັບຮູ້ໂອກາດທາງທຸລະກິດ, ປັດໄຈດ້ານການບໍລິຫານຈັດການໂອກາດທາງທຸລະກິດ, ປັດໄຈດ້ານນະໂຍບາຍຂອງພາກລັດ, ໄຈດ້ານການເງິນ, ປັດໄຈດ້ານໂຄງລ່າງພື້ນຖານ, ປັດໄຈທາງການຕະຫຼາດ ມີຄ່າສະເລ່ຍລວມເທົ່າກັບ 4.09, 3.89, 3.80, 3.88, 3.70, 3.79, 3.57 ແລະ 3.67 ຕາມລຳດັບ ແມ່ນມີລະດັບຄວາມສຳຄັນຫຼາຍ; ເຊິ່ງປັດໄຈທີ່ສົ່ງຜົນຕໍ່ການເຕີບຕໍ່ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ ໂດຍການວິເຄາະແບບຈຳລອງ Ordinal Least Square ເຫັນວ່າ: R-Squared = 0.7068 ພົບວ່າ: ປັດໄຈຕ່າງໆທີ່ກຳນົດຂຶ້ນມາສາມາດອະທິບາຍການຂະຫຍາຍຕົວ ແລະ ຄວາມໝັ້ນຄົງຂອງວິສາຫະກິດໄດ້ 70.68% ແລະ 67.64% ແລະ ຈາກຜົນການທົດສອບຄ່າ F-statistic = 2.564 & 5,464 ແລະ Prob > F = 0.011 ແລະ 0,000 ສະແດງວ່າ ຢ່າງໜ້ອຍມີ 1 ປັດໄຈ ທີ່ມີຄວາມສຳພັນ ຫຼື ມີຜົນຕໍ່ການຂະຫຍາຍຕົວ

ແລະ ຄວາມໝັ້ນຄົງ ຂອງວິສາຫະກິດ ດ້ວຍລະດັບຄວາມສຳຄັນ 0.05 ແລະ 0,01 ຕາມລຳດັບ. ເຊິ່ງສາມາດນຳມາສ້າງແບບຈຳລອງທາງເສດຖະມິຕິໄດ້ ດັ່ງນີ້:

$Y_1 = 3.51 + 0.13\,X_1 + 0.11\,X_2 + 0.24\,X_6$

(1.71*) (2.29**) (2.62***)

$Y_2 = 2.70 + 0.24\,X_6 + 0.24\,X_8$

(1.75*) (1,73*)

ຈາກແບບຈຳລອງຂ້າງເທິງ ສາມາດອະທິບາຍຄວາມສຳພັນ ແລະ ຄ່າສຳປະສິດຂອງບັນດາຕົວປ່ຽນອິດສະຫຼະກັບຕົວປ່ຽນຕາມໄດ້ ດັ່ງນີ້:

ແບບຈຳລອງທີ 1:

ປັດໄຈດ້ານພາວະຄວາມເປັນຜູ້ນຳ ($X_1$) : ເຫັນວ່າ ມີການພົວພັນໃນທິດທາງດຽວກັນ ກັບ ການຂະຫຍາຍຕົວກັບຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນໍ້າທາ ໂດຍມີຄ່າສຳປະສິດເທົ່າກັບ 0.13 ສາມາດອະທິບາຍວ່າ ເມື່ອຜູ້ປະກອບມີລະດັບພາວະຄວາມເປັນຜູ້ນຳສູງຂຶ້ນ 1 ລະດັບ ຈະສົ່ງຜົນເຮັດໃຫ້ວິສາຫະກິດມີການຂະຫຍາຍຕົວເພີ່ມຂຶ້ນ 0.13 ລະດັບ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.1.

ປັດໄຈດ້ານການຕັດສິນໃຈແບບຍຸດທະສາດ ($X_2$) : ເຫັນວ່າ ມີການພົວພັນໃນທິດທາງດຽວກັນການຂະຫຍາຍຕົວກັບຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນໍ້າທາ ໂດຍມີຄ່າສຳປະສິດເທົ່າກັບ 0.11 ສາມາດອະທິບາຍວ່າ ເມື່ອຜູ້ປະກອບການໃຫ້ຄວາມສຳຄັນຕໍ່ກັບແຜນຍຸດທະສາດໂດຍຂອງລວມຂອງວິສາຫະກິດເພີ່ມຂຶ້ນ 1 ລະດັບ ຈະສົ່ງຜົນເຮັດໃຫ້ວິສາຫະກິດມີການຂະຫຍາຍຕົວເພີ່ມຂຶ້ນ 0.11 ລະດັບ ໂດຍຜ່ານຄວາມສຳຄັນທາງສະຖິຕິ 0.05.

ປັດໄຈດ້ານການເງິນ ($X_6$) : ເຫັນວ່າ ການພົວພັນໃນທິດທາງດຽວກັນ ກັບ ການຂະຫຍາຍຕົວກັບຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນໍ້າທາ ໂດຍມີຄ່າສຳປະສິດເທົ່າກັບ 0.24 ສາມາດອະທິບາຍວ່າ ເມື່ອວິສາຫະກິດມີມາດຕະຖານດ້ານການເງິນສູງຂຶ້ນ 1 ລະດັບ ຈະສົ່ງຜົນເຮັດໃຫ້ວິສາຫະກິດຂະຫຍາຍຕົວເພີ່ມຂຶ້ນ 0.24 ລະດັບໂດຍຜ່ານຄວາມສຳຄັນທາງສະຖິຕິ 0.01.

ແບບຈຳລອງທີ 2:

ປັດໄຈດ້ານການເງິນ ($X_6$) : ເຫັນວ່າ ການພົວພັນໃນທິດທາງດຽວກັນ ກັບ ສະພາບຄ່ອງຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນໍ້າທາ ໂດຍມີຄ່າສຳປະສິດເທົ່າກັບ 0.24 ສາມາດອະທິບາຍວ່າ ເມື່ອວິສາຫະກິດມີມາດຕະຖານດ້ານການເງິນສູງຂຶ້ນ 1 ລະດັບ ຈະສົ່ງຜົນເຮັດໃຫ້ວິສາຫະກິດມີສະພາບຄ່ອງ ຫຼື ມີຄວາມໝັ້ນຄົງໃນການດຳເດີນວິສາຫະກິດເພີ່ມຂຶ້ນ 0.24 ລະດັບໂດຍຜ່ານຄວາມສຳຄັນທາງສະຖິຕິ 0.1

ປັດໄຈດ້ານທາງການຕະຫຼາດ ($X_8$) : ເຫັນວ່າ ການພົວພັນໃນທິດທາງດຽວກັນ ກັບ ສະພາບຄ່ອງຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນໍ້າທາ ໂດຍມີຄ່າສຳປະສິດເທົ່າກັບ 0.24 ສາມາດອະທິບາຍວ່າ ເມື່ອວິສາຫະກິດມີທັກສະດ້ານການຕະຫຼາດຂອງຜູ້ປະກອບການສູງຂຶ້ນ 1 ລະດັບ ຈະສົ່ງຜົນເຮັດໃຫ້ວິສາຫະກິດມີສະພາບຄ່ອງ ຫຼື ມີຄວາມໝັ້ນຄົງໃນການດຳເດີນວິສາຫະກິດເພີ່ມຂຶ້ນ 0.24 ລະດັບໂດຍຜ່ານຄວາມສຳຄັນທາງສະຖິຕິ 0.1

## 4. ວິພາກຜົນ

ສະພາບການດຳເນີນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນໍ້າທາ ພົບວ່າ ວິສາຫະກິດສ່ວນຫຼາຍແມ່ນກິດຈະການຂອງຄົນລາວ, ສ່ວນກິດຈະການຮ່ວມທຶນກັບຕ່າງປະເທດ ມີພຽງເລັກນ້ອຍ, ດຳເນີນວິສາຫະກິດຢູ່ໃນຮູບແບບເຈົ້າຂອງຄົນດຽວ ແລະ ເປັນວິສາຫະກິດຂະໜາດນ້ອຍເປັນສ່ວນໃສ່ ເນື່ອງຈາກມີມູນຄ່າທຶນຈົດທະບຽນໜ້ອຍກວ່າ 100,000,000 ກີບ ແລະ ນຳໃຊ້ເງິນທຶນຂອງຄອບຄົວ ເຊິ່ງດຳເນີນວິສາຫະກິດການຄ້າໂດຍສ່ວນໃຫຍ່, ຮອງລົງມາແມ່ນວິສາຫະກິດການຜະລິດ ແລະ ວິສາຫະກິດການບໍລິການ ຕາມລຳດັບ; ເຊິ່ງຜົນການດຳເນີນກິດຈະການເມື່ອທຽບຜົນການດຳເນີນງານໃສ່ປີທີ່ຜ່ານມາເຫັນວ່າວິສາຫະກິດຈຳນວນຫຼາຍແມ່ນມີລາຍຮັບລຸດລົງ ແລະ ມີລາຍຮັບຢູ່ໃນລະດັບເທົ່າເດີມ, ສ່ວນວິສາຫະກິດທີ່ມີລາຍຮັບ

ເພີ່ມຂຶ້ນມີພຽງເຫຼັກນ້ອຍ ເຊິ່ງສອດຄ່ອງກັບຜົນການສຶກສາ ຂອງ Termtrirakij (2012) ພົບວ່າ ວິສາຫະກິດສ່ວນໃຫຍ່ເປັນກິດຈະການຂອງຄົນພາຍໃນ, ວິສາຫະກິດຂະໜາດນ້ອຍກວມເອົາສ່ວນຫຼາຍ ແລະ ດຳເນີນວິສາຫະກິດຢູ່ໃນຮູບແບບເຈົ້າຂອງຄົນດຽວ, ກິດຈະການໃນການດຳເນີນວິສາຫະກິດຫຼັກໆແມ່ນຂະແໜງການຄ້າ ແລະ ການບໍລິການ ແລະ ຍັງສອດຄ່ອງກັບການຜົນສຶກສາຂອງ Kongkadvanich & Sincharoonsak (2020) ພົບວ່າ ການດຳເນີນວິສາຫະກິດສ່ວນໃຫຍ່ເປັນເຈົ້າຂອງຄົນດຽວ, ດຳເນີນກິດຈະການໃນຂະແໜງການຄ້າເປັນສ່ວນຫຼາຍ, ມີລາຍຮັບຈາກການດຳເນີນວິສາຫະກິດທີ່ລຸດລົງເມື່ອທຽບໃສ່ປີຜ່ານມາ ອັນເນື່ອງມາຈາກຜົນກະທົບທີ່ສືບເນື່ອງມາຈາກການແຜ່ລະບາດຂອງໂລກລະບາດ ໂຄວິດ 19 ໃນໄລຍະຜ່ານມາ.

ປັດໄຈທີ່ສົ່ງຜົນຕໍ່ການຂະຫຍາຍຕົວຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ແຂວງຫຼວງນ້ຳທາ ພົບວ່າ ດ້ານພາວະຄວາມເປັນຜູ້ນຳ ມີຄວາມສຳຄັນໃນລະດັບຫຼາຍ ເຊິ່ງສອດຄ່ອງກັບການສຶກສາຂອງ Chongvisa (2006) ພົບວ່າ ພາວະການເປັນຜູ້ນຳຂອງຜູ້ປະກອບການ SMEs ແມ່ນຢູ່ໃນລະດັບສູງ ແລະ ການສຶກສາຂອງ Termtrirakij (2012) ພົບວ່າ ປັດໄຈດ້ານຜູ້ປະກອບການສົ່ງຜົນກະທົບຕໍ່ການດຳເນີນງານ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນລະດັບຫຼາຍ ແລະ ຍັງສອດຄ່ອງກັບການສຶກສາຂອງ Chongvisal (2006) ພົບວ່າ ການປະກອບການທີ່ມີຄວາມສຳເລັດສູງ ໂດຍມີລະດັບຄວາມສຳຄັນທາງສະຖິຕິ ແລະ ສອດຄ່ອງກັບ ການສຶກສາຂອງ Chiamchitting (2010) ທີ່ວ່າ ປັດໄຈພາວະຜູ້ນຳຂອງຜູ້ປະກອບການ ມີຜົນຕໍ່ການດຳເນີນວິສາຫະກິດຂະໜາດນ້ອຍ ແລະ ກາງ ດ້ອຍລະດັບຄວາມສຳຄັນທາງສະຖິຕິ. ປັດໄຈດ້ານການຕັດສິນໃຈແບບຍຸດທະສາດ ເຫັນວ່າມີຄວາມສຳຄັນໃນລະດັບຫຼາຍ ເຊິ່ງສອດຄ່ອງກັບການສຶກສາຂອງ Romyen (2019) ພົບວ່າ ຄວາມສາມາດທາງນະວັດຕະກຳດ້ານການວາງແຜນຍຸດທະສາດ ມີຜົນຕໍ່ການດຳເນີນງານຂອງກິດຈະການໃນລະດັບຫຼາຍ ເຊັ່ນດຽວກັບ ການສຶກສາຂອງ Donbanthao (2023) ພົບວ່າ ການພັດທະນາ ແລະ ການປະເມີນ ແຜນຍຸດທະສາດ ມີຜົນຕໍ່ການດຳເນີນທຸລະກິດ ແລະ ຄວາມສອດຄ່ອງກັນໃນລະດັບຫຼາຍທີ່ສຸດ ເປັນຕົ້ນ ວິໄສທັດ, ພັນທະມິດ, ເປົ້າໝາຍ, ກົດລະຍຸດ, ມາດຕະການ ແລະ ຕົວຊີ້ວັດ; ພ້ອມຍັງ ມີການພົວພັນໃນທິດທາງດຽວກັນ ກັບ ການຂະຫຍາຍຕົວກັບຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ເຊັ່ນດຽວກັບການສຶກສາຂອງ Donbanthao (2023) ພົບວ່າ ການພັດທະນາ ແລະ ການປະເມີນ ກົດລະຍຸດການດຳເນີນທຸລະກິດ ສຳລັບຜູ້ປະກອບການ ເປັນຕົ້ນ ວິໄສທັດ, ພັນທະມິດ, ເປົ້າໝາຍ, ກົດລະຍຸດ, ມາດຕະການ ແລະ ຕົວຊີ້ວັດ ມີຄວາມສອດຄ່ອງກັນໃນລະດັບຫຼາຍທີ່ສຸດ ແລະ ສົ່ງຜົນຕໍ່ການດຳເນີນວິສາຫະກິດ ໂດຍມີລະດັບຄວາມສຳຄັນທາງສະຖິຕິ ແລະ ສອດຄ່ອງກັບການສຶກສາ ຂອງ Chairojwong (2018) ທີ່ວ່າ ປັດໄຈດ້ານການຕັດສິນໃຈຍຸທະສາດ ສົ່ງຜົນຕໍ່ການເຕີບໂຕ ຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ດ້ອຍລະດັບຄວາມສຳຄັນທາງສະຖິຕິ. ປັດໄຈດ້ານການເງິນ ເຫັນວ່າມີຄວາມສຳຄັນໃນລະດັບ ຫຼາຍ ເຊິ່ງສອດຄ່ອງກັບ ການສຶກສາຂອງ Reokarn et al. (2023) ພົບວ່າ ປັດໄຈດ້ານການເງິນ ສົ່ງຜົນຕໍ່ການດຳເນີນ ແລະ ການເຕີບໂຕ ຂອງທຸລະກິດ ໂດຍລວມຢູ່ໃນລະດັບຫຼາຍ ແລະ ການສຶກສາຂອງ Hongsakhone (2023) ທີ່ວ່າ ປັດໄຈທາງດ້ານການເງິນ ເປັນຕົ້ນແມ່ນ ການເຂົ້າຫາແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງພະບາງ ມີຄວາມສຳຄັນໃນລະດັບຫຼາຍ ຕໍ່ການຫຍາຍຂະຫຍາຍຕົວ ແລະ ມີການພົວພັນໃນທິດທາງດຽວກັນ ກັບການຂະຫຍາຍຕົວ ແລະ ສະພາບຄ່ອງຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ເຊິ່ງສອດຄ່ອງກັບການສຶກສາຂອງ kasorn (2018) ທີ່ວ່າ ປັດໄຈທີ່ມີອິດທິພົນຕໍ່ໄລຍະການຈະເລີນເຕີບໂຕ ໂດຍລວມແມ່ນ ຢູ່ໃນລະດັບສູງໄດ້ແກ່ປັດໄຈທາງດ້ານຊັບພະຍາກອນທາງການເງິນ ເຊັ່ນດຽວກັບ

ການສຶກສາຂອງ Hoongsengpha et al. (2020) ພົບວ່າ ປັດໄຈດ້ານເສດຖະກິດ-ການເງິນ ມີຄວາມສຳຄັນທາງບວກ ຕໍ່ກັບຄວາມສຳເລັດຂອງການດຳເນີນທຸລະກິດ ດ້ວຍລະດັບ ຄວາມສຳຄັນທາງສະຖິຕິ ແລະ ການສຶກສາຂອງ Kongkadvanich & Sincharoonsak (2020) ພົບວ່າ ຜົນດຳເນີນງານທາງການເງິນສາມາດວັດໄດ້ຈາກລາຍໄດ້ຂອງ ວິສາຫະກິດ ເຊິ່ງປັດໄຈທາງການເງິນ ສາມາດບົ່ງບອກເຖິງ ຄວາມອາດສາມາດໃນການກຳເນີນງານຂອງວິສາຫະກິດ ດ້ວຍລະດັບຄວາມສຳຄັນທາງສະຖິຕິ. ປັດໄຈທາງການ ຕະຫຼາດ ເຫັນວ່າ ມີຄວາມສຳຄັນໃນລະດັບຫຼາຍ ເຊິ່ງ ສອດຄ່ອງກັບການສຶກສາຂອງ Romyen (2019) ພົບວ່າ ຄວາມສາມາດທາງການຕະຫຼາດ ມີຜົນການດຳເນີນງານຂອງ ວິສາຫະກິດ ມີຄວາມສຳຄັນໃນລະດັບສູງ. ເຊັ່ນດຽວກັບ Vaisati et al. (2023) ພົບວ່າສ່ວນປະສົມທາງການຕະຫຼາດ ເປັນຕົ້ນ ໂປໂມຊັນ ແລະ ການລົດລາຄາໃຫ້ລູກຄ້າປະຈຳ ການພັດທະນາກົດລະຍຸດສ່ວນປະສົມທາງການຕະຫຼາດ ມີ ຄວາມສຳຄັນຕໍ່ຜົນສຳເລັດໃນການດຳເນີນທຸລະກິດ ໃນ ລະດັບຫຼາຍ ແລະ ມີການພົວພັນໃນທິດທາງດຽວກັນ ກັບ ສະພາບຄ່ອງຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ເຊິ່ງ ສອດຄ່ອງກັບການສຶກສາຂອງ Romyen (2019) ພົບວ່າ ຄວາມສາມາດທາງການຕະຫຼາດ ເປັນຕົ້ນ ດ້ານຊ່ອງທາງ ການຈຳໜ່າຍ, ດ້ານການສື່ສານ ແລະ ດ້ານຜະລິດຕະພັນ ສົ່ງ ຜົນຕໍ່ການດຳເນີນກິດຈະການ ດ້ວຍລະດັບຄວາມສຳຄັນທາງ ສະຖິຕິ. ເຊັ່ນດຽວກັບ Chaimali (2021) ພົບວ່າ ປັດໄຈ ການມຸ້ງເນັ້ນທາງການຕະຫຼາດ ແລະ ຜູ້ປະກອບການ ມີ ຄວາມສຳພັນທາງບວກ ກັບ ຄວາມສຳເລັດຂອງວິສາຫະກິດ ຂະໜາດນ້ອຍ ແລະ ກາງ ດ້ວຍລະດັບຄວາມສຳຄັນທາງ ສະຖິຕິ.

## 5. ສະຫຼຸບ

ສະພາບການດຳເນີນວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ ຈະເຫັນໄດ້ວ່າ ຜູ້ປະກອບການວິ ສາຫະກິດ ສ່ວນຫຼາຍເປັນເພດຊາຍ ທີ່ມີຊ່ວງອາຍຸແຕ່ 37–43 ປີ, ມີລະດັບການສຶກສາຈົບຊັ້ນສູງ, ຂ້ອນຂ້າງມີປະສົບ ການໃນການເຮັດວຽກກ່ຽວກັບວິສາຫະກິດມາກ່ອນ ໃນ ດ້ານການບໍລິການ, ເຊິ່ງມີປະສົບການຢູ່ລະຫວ່າງ 5-9 ປີ, ລັກສະນະຂອງວິສາຫະກິດ ແມ່ນກິດຈະການຂອງຄົນລາວ ເປັນຮູບແບບຂອງວິສາຫະກິດເຈົ້າຂອງຄົນດຽວ ມີມູນຄ່າ ທຶນຈົດທະບຽນ ແມ່ນ 100,000,000 ກີບ ລົງມາ, ແຫຼ່ງ ເງິນທຶນທີ່ສຳຄັນໃນການດຳເນີນວິສາຫະກິດສ່ວນຫຼາຍ ແມ່ນມາຈາກເງິນທຶນຂອງຄອບຄົວ; ວິສາຫະກິດຂະໜາດ ນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ ໂດຍສ່ວນຫຼາຍ ແມ່ນມີພະນັກງານຢູ່ລະຫວ່າງ 5–20 ຄົນ ເຊິ່ງການດຳເນີນ ວິສາຫະກິດ ແມ່ນໜ້ອຍກວ່າ 5 ປີ ລູກຄ້າທີ່ມາໃຊ້ບໍລິການ ສ່ວນໃຫຍ່ແມ່ນລູກຄ້າພາຍໃນແຂວງ. ຜົນການດຳເນີນງານ ຂອງວິສາຫະກິດ ແມ່ນບໍ່ຄ່ອຍດີ ຖ້າທຽບໃສ່ປີທີ່ຜ່ານມາ ໂດຍສ່ວນຫຼາຍ ມີລາຍຮັບລວມ ແລະ ກຳໄລສຸດທິ ລຸດລົງ.

ປັດໄຈທີ່ສົ່ງຜົນຕໍ່ການຂະຫຍາຍຕົວຂອງວິສາຫະ ກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ ພົບວ່າມີ 3 ປັດໄຈທີ່ມີການພົວພັນໄປທິດທາງດຽວກັນ ຄື: ປັດໄຈ ດ້ານພາວະຄວາມເປັນຜູ້ນຳ ມີຄວາມສຳຄັນຢູ່ໃນລະດັບ ຫຼາຍ ແລະ ສົ່ງຜົນຕໍ່ການເຕີບໂຕຂອງວິສາຫະກິດ ດ້ວຍ ລະດັບຄວາມສຳຄັນທາງສະຖິຕິ 0.1; ປັດໄຈດ້ານການ ຕັດສິນໃຈແບບຍຸດທະສາດ ມີຄວາມສຳຄັນຢູ່ໃນລະດັບ ຫຼາຍ ແລະ ສົ່ງຜົນຕໍ່ການເຕີບໂຕຂອງວິສາຫະກິດ ດ້ວຍ ລະດັບຄວາມສຳຄັນທາງສະຖິຕິ 0.05; ປັດໄຈດ້ານການເງິນ ມີຄວາມສຳຄັນຢູ່ໃນລະດັບຫຼາຍ ແລະ ສົ່ງຜົນຕໍ່ການເຕີບໂຕ ແລະ ຄວາມໝັ້ນຄົງ ຂອງວິສາຫະກິດ ດ້ວຍລະດັບຄວາມ ສຳຄັນທາງສະຖິຕິ 0.01 ແລະ 0.1 ຕາມລຳດັບ; ປັດໄຈທາງ ການຕະຫຼາດ ມີລະດັບຄວາມສຳຄັນຫຼາຍ ແລະ ສົ່ງຜົນຕໍ່ ຄວາມໝັ້ນຄົງ ຂອງວິສາຫະກິດ ດ້ວຍລະດັບຄວາມສຳຄັນ ທາງສະຖິຕິ 0.1. ສຳລັບປັດໄຈອື່ນເຫັນວ່າ ບໍ່ຜ່ານຄວາມສຳ ຄັນທາງສະຖິຕິ ຫຼື ບໍ່ສົ່ງຜົນຕໍ່ກັບການຂະຫຍາຍຕົວກັບຂອງ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຂວງຫຼວງນ້ຳທາ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Chaimali., C & Untachai., S. (2021). The factors influencing onthesuccess of small and medium enterprises in Udonthani Province. *Academic and research journals Northeastern University, 11*(1), 1-15.

Chairojwong, S. ( 2018). Factors affecting the growth of SMEs in manufacturing sector of Thailand. *Journal of politics administration and law, 10*(2), 1-28.

Chiamchittrong, W. (2010). *The entrepreneurial factors that affect the performance of small and medium enterprises in Thailand* [unpublished master dissertation]. National Institute of Development Administration. Page 108-160.

Chongvisal, R. (2006). *The study of leadership of entrepreneurs in Thai small and medium sized enterprises.* Proceedings of 44th Kasetsart University Annual Conference: Education, Social Sciences, Agricultural Extension and Communication, Humanities and Home Economics, (pp. 275-282).

Department of Planning and Investment Luangnamtha Province. (2024). *Economic-social development plan of Luangnamtha Province 5 Years IX. (2021-2025).*

Donbanthao, A. (2023). Business dtrategy for dmall and medium rnterprises (SMEs) rntrepreneurs in KamphaengPhet Province. *Journal of Management Science Pibulsongkram Rajabhat University, 5*(3), 1-19.

Hongsakhone, S. (2023). *Promote access to capital sources for micro, small and medium enterprises in Luangprabang Province*. Lao National Institute of Politics and Administration. Page 4-7.

Hoongsengpha, S., Indavong, D., Phumma, S., Somsacksaysompheng, O., Phengsavat, S., Khomthavong, P., Sitthirajvongsa, V & Oupravath Y. (2020). The Success factors of SME business in Luangpabang Capital. *Souphanouvong Journal: Multi-disciplinary Research of Souphanouvong University 6*(1), 154-161.

Kasorn, K., Utsaha, A., Heangtrakul, N., Banjakorn, B., & Wongkhut, J. (2018) . Factors affecting SMEs' different stages of business growth: A Case study of Chiangrai Province. *Kasalongkham Research Journal, 7*(2), 1-9.

Kongkadvanich, L., & Sincharoonsak, T. (2020). Perfornance analysis of small and medium enterprises in Thailand. *Journal of MCU Nakhondhat, 7*(10), 1-14.

Reokarn, T., Thipsri, N., Techapunratanakul, N., & Srivichai, M. (2023). The influence of business operational factors on the growth of SMEs in Chiangrai Province. *Journal of Marketing and Management, 10*(2), 1-21.

Romyen, S. (2019). *Influence of innovativeness and marketing capability toward firm performance of SMEs in Songkha Province* [unpublished master dissertation]. Songkha University. Page 55-77.

Termtrirakij, P. (2012). *Factors influencing performance of small and medium Enterprises: A case study of electical and electtronic industries* [unpublished master dissertation]. Sripatum University. Page 11-15, 21-23, 46-51, 57-63, 65-66, 67-71.

Vaisati, C., Chotikunnanon, T., & Khamkhankeo, P. ( 2020) . Guideline of marketing management in Small Enterprise; A case stady of Tong Heng

Kee Limited Partnership. *Journal of Marketing and Management, 7*(1), 1-16.

Virit, T. (2022). Factors Influencing business success of entrepreneurs (SMEs) in Pathumthani Province During The COVID-19 pandemic. *Journal of Educational Innovation and Research, 6*(2), 1-16.